ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 08 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 09 ມີນາ 2017

ສໍານັກງານ ຄຄຊ
ເລກທີ 0268
ວັນທີ 10 MAR 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈໍາອາທິດ

ທີ 20-24/02/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,64% ທຽບເງິນເອີໂຣ ເນື່ອງຈາກຕົວເລກຜູ້ຂໍສະຫວັດດີການວ່າງງານຂອງສ.ອາເມລິກາ ໃນອາທິດຜ່ານມາຫຼຸດລົງຈາກ 2.077.000 ຄົນ ເປັນ 2.060.000 ຄົນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 13-17/02/2017 | ອາທິດນີ້ 20-24/02/2017 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0661 | 1,0593 | 0,64% |
| ໂດລາ/ເຢນ | 113,40 | 112,45 | 0,84% |
| ໂດລາ/ບາດ | 34,98 | 34,920 | 0,17% |
| ໂດລາ/ເປໂຊ | 50,00 | 50,15 | -0,29% |
| ໂດລາ/ຣູເປັຍ | 13.328,0 | 13.329,00 | -0,01% |
| ໂດລາ/ໂດລາສິງກະໂປ | 1,4166 | 1,4028 | 0,98% |
| ໂດລາ/ຢວນ | 6,8682 | 6,8705 | -0,03% |

### 1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

- ລາຄານໍ້າມັນເພີ່ມຂຶ້ນ 0,60% ຈາກ 54,62 ໂດລາ/ບາເຣວ ມາເປັນ 54,95 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນໍ້າມັນຂອງສະຫະລັດອາເມລິກາ ເພີ່ມຂຶ້ນ ຊຶ່ງເຫັນໄດ້ຈາກຄັງສໍາຮອງນໍ້າມັນແອັດຊັງຂອງສະຫະລັດອາເມລິກາຫຼຸດລົງ 2,62 ລ້ານບາເຣວໃນອາທິດ2ຜ່ານມາ. ສໍາລັບລາຄາຄໍາ ເພີ່ມຂຶ້ນ 1,50% ຈາກ 1,237,57 ໂດລາ/ອອນ ມາເປັນ 1.256,16 ໂດລາ/ອອນ ເນື່ອງຈາກນັກລົງທຶນຍັງບໍ່ເຊື່ອໝັ້ນຕໍ່ເສດຖະກິດຂອງໂລກ ເຮັດໃຫ້ນັກລົງທຶນຫັນມາ